


# ຂໍ້ມູນສຳຄັນສຳລັບການຊ່ວຍເຫຼືອດ້ານແຮງງານ

ໃນນາມພະນັກງານເກົ່າຂອງຫົວໜ່ວຍທຸລະກິດ-ແຮງງານ, ທ່ານມີຄວາມເປັນໄປໄດ້ທີ່ຈະມີສິດທີໄດ້ຮັບຜົນປະໂຫຍດ ຈາກການຊ່ວຍເຫຼືອແຮງງານ (TAA). TAA ເປັນໂຄງການຂອງລັດຖະບານກາງທີ່ຊ່ວຍພະນັກງານຜູ້ທີ່ໄດ້ຮັບຜົນກະທົບດ້ານລົບຈາກແຮງງານຕ່າງປະເທດ. ຖ້າປະຈຸບັນທ່ານຫວ່າງງານຢູ່ ແລະ ຕ້ອງການຍົກລະດັບທັດສະການເຮັດວຽກ, ໂຄງການ TAA ອາດຈະສາມາດຊ່ວຍທ່ານໄດ້. ບັນດາຜົນປະໂຫຍດເຫຼົ່ານີ້ຍັງມີໃຫ້ທ່ານ, ແຕ່ທ່ານຕ້ອງເລີ່ມດຳເນີນການດຽວນີ້! ມີຊ່ຽວຊານ TAA ຢູ່ທີ່ສູນຊ່ວຍເຫຼືອແຮງງານທ້ອງຖິ່ນສາມາດຊ່ວຍທົບທວນຄວາມເປັນໄປໄດ້ດັ່ງນີ້:

## ການຝຶກອົບຮົມ

- ຝຶກອົບຮົມແບບເຕັມເວລາ ຫຼື ເຄິ່ງເວລາ
- ໃນຫ້ອງຮຽນ ຫຼື ທາງອອນລາຍນ໌
- ຝຶກໃນໜ້າວຽກຕົວຈິງ
- ການຝຶກງານ
- ຄວາມເປັນໄປໄດ້ໃນການເສີມລາຍໄດ້ປະຈຳອາທິດ ເມື່ອຢູ່ໃນຊ່ວງ TAA ອະນຸມັດ

## ເບ້ຍລ້ຽງຊອກວຽກ

- 90% ຂອງເບ້ຍລ້ຽງໃຊ້ຈ່າຍໃນການຊອກວຽກເຊັ່ນ ເດີນທາງ, ອາຫານ, ແລະ ທີ່ພັກເຊົາ
- ເບ້ຍລ້ຽງເພື່ອຊ່ວຍທ່ານຊອກຫາວຽກນອກອານາເຂດຂອງທ່ານ
- ເງິນເບ້ຍລ້ຽງສູງສຸດເຖິງ $1,250

## ເບ້ຍລ້ຽງປ່ຽນວຽກ

- 90% ຂອງເບ້ຍລ້ຽງໃນການໃຊ້ຈ່າຍກັບທ່ານ ແລະ ຄອບຄົວໃນການປ່ຽນວຽກ
- ຖ້າທ່ານສາມາດຫາວຽກທີ່ເໝາະສົມຢູ່ນອກອານາເຂດຂອງທ່ານ
- ມີຄ່າໃຊ້ຈ່າຍເພີ່ມເຕີມສູງເຖິງ $1,250

## ໂຄງການຊ່ວຍເຫຼືອແຮງງານ (RTAA)

- ເສີມຄ່າແຮງງານໃຫ້ກັບພະນັກງານທີ່ມີອາຍຸສູງກວ່າ 50
- ຕ້ອງມີລາຍຮັບເງິນເດືອນໝົດປີຕ່ຳກວ່າ $50,000
- ເສີມຊ່ອງຫວ່າງລາຍຮັບລະຫວ່າງວຽກເກົ່າ ແລະ ວຽກໃໝ່ຂອງທ່ານ
- ອາດໄດ້ຮັບສູງສຸດເຖິງ $10,000

ຕິດຕໍ່ໜ່ວຍງານຊ່ຽວຊານໂຄງການທີ່ໝາຍເລກ **518-485-1597** ຖ້າທ່ານຍັງບໍ່ໄດ້ຮັບໃບຄຳຮ້ອງ, ຫຼື ເຂົ້າໄປຫາສູນປະສານງານແຮງງານຂອງທ່ານ ເພື່ອລົມກັບຊ່ຽວຊານ TAA. ເພື່ອຄົ້ນຫາສູນປະສານງານແຮງງານທ້ອງຖິ່ນເຂົ້າເບິ່ງ **www.labor.ny.gov/career-center-locator** ແລະກົດໃສ່ “Find My Career Center”.



ພະແນກແຮງງານລັດນິວຢອກ (New York) ແມ່ນນາຍຈ້າງ/ໂຄງການທີ່ໃຫ້ໂອກາດເທົ່າທຽມກັນ. ອຸປະກອນຊ່ວຍ ແລະ ການບໍລິການຊ່ວຍເຫຼືອແມ່ນມີໃຫ້ແກ່ບຸກຄົນທີ່ມີຄວາມພິການຕາມຄຳຂໍ.